# CHAT (ບັນຊີກວດຄັດກອງອອທິສຶມໃນເດັກນ້ອຍ)

ການກວດຄັດກອງອອທິສຶມ ໃນເດັກອາຍຸ 18–24 ເດືອນ

ຊື່ຜູ້ປ່ວຍ: ______________________ ວັນເດືອນປີເກີດ: ______________________

ເລກທີບັນທຶກທາງການແພດ: ______________________ ວັນທີມື້ນີ້: ______________________

**ພາກ A: ໃຫ້ພໍ່ແມ່ເປັນຜູ້ຕື່ມຂໍ້ມູນ**

| | | |
|---|---|---|
| 1. ລູກຂອງທ່ານມັກໃຫ້ອູ້ມແກວ່ງ ຫຼື ນັ່ງເດັ້ງເທິງຫົວເຂົ່າຂອງທ່ານ ແລະ ອື່ນໆ ບໍ? | ☐ ແມ່ນ | ☐ ບໍ່ |
| 2. ລູກຂອງທ່ານສົນໃຈ ເດັກນ້ອຍຄົນອື່ນ ບໍ? | ☐ ແມ່ນ | ☐ ບໍ່ |
| 3. ລູກຂອງທ່ານມັກປີນປ່າຍ ສິ່ງຂອງຕ່າງໆ ເຊັ່ນ ປີນຂັ້ນໄດ ບໍ? | ☐ ແມ່ນ | ☐ ບໍ່ |
| 4. ລູກຂອງທ່ານມັກຫຼິ້ນຈ໊ະເອ໋ ຫຼື ຫຼິ້ນຊອກລີ້ ບໍ? | ☐ ແມ່ນ | ☐ ບໍ່ |
| 5. ລູກຂອງທ່ານເຄີຍຫຼິ້ນສົມມຸດບໍ ຕົວຢ່າງເຊັ່ນ ສົມມຸດວ່າຊົງນ້ຳຊາ ໂດຍໃຊ້ຈອກ ແລະ ກາຊາຂອງຫຼິ້ນ ຫຼື ສົມມຸດເປັນສິ່ງອື່ນໆ? | ☐ ແມ່ນ | ☐ ບໍ່ |
| 6. ລູກຂອງທ່ານເຄີຍໃຊ້ນິ້ວຊີ້ ຊີ້ໄປໃສ່ສິ່ງຂອງ ເພື່ອຂໍສິ່ງນັ້ນ ບໍ? | ☐ ແມ່ນ | ☐ ບໍ່ |
| 7. ລູກຂອງທ່ານເຄີຍໃຊ້ນິ້ວຊີ້ ຊີ້ໄປໃສ່ສິ່ງຂອງ ເພື່ອສະແດງຄວາມສົນໃຈ ຕໍ່ສິ່ງນັ້ນ ບໍ? | ☐ ແມ່ນ | ☐ ບໍ່ |
| 8. ລູກຂອງທ່ານຫຼິ້ນຂອງຫຼິ້ນນ້ອຍໆ (ເຊັ່ນ ລົດ ຫຼື ບລັອກໄມ້) ໄດ້ຢ່າງຖືກຕ້ອງບໍ ໂດຍບໍ່ພຽງແຕ່ເອົາເຂົ້າປາກ ຈັບຫຼິ້ນໄປມາ ຫຼື ໂຍນຖິ້ມ? | ☐ ແມ່ນ | ☐ ບໍ່ |
| 9. ລູກຂອງທ່ານເຄີຍເອົາສິ່ງຂອງ ມາຫາທ່ານ (ພໍ່ແມ່) ເພື່ອໃຫ້ທ່ານເບິ່ງ ບໍ? | ☐ ແມ່ນ | ☐ ບໍ່ |

**ພາກ B: ທ່ານໝໍ ຫຼື ຜູ້ໃຫ້ບໍລິການສາທາລະນະສຸກ**

| | | |
|---|---|---|
| 1. ໃນລະຫວ່າງການກວດ ເດັກໄດ້ປະສານສາຍຕາກັບທ່ານ ບໍ? | ☐ ແມ່ນ | ☐ ບໍ່ |
| 2. ດຶງດູດຄວາມສົນໃຈຂອງເດັກ ຈາກນັ້ນ ຊີ້ໄປໃສ່ສິ່ງຂອງທີ່ໜ້າສົນໃຈ ຢູ່ອີກຟາກໜຶ່ງຂອງຫ້ອງ ແລ້ວເວົ້າວ່າ “ເບິ່ງແມ້! ຢູ່ພູ້ນມີ (ຊື່ຂອງຫຼິ້ນ) ເດ!” ສັງເກດໜ້າຂອງເດັກ. ເດັກເບິ່ງຕາມໄປ ເພື່ອເບິ່ງສິ່ງທີ່ທ່ານຊີ້ຢູ່ ບໍ? | ☐ ແມ່ນ | ☐ ບໍ່ |
| 3. ດຶງດູດຄວາມສົນໃຈຂອງເດັກ ຈາກນັ້ນ ຍື່ນຈອກ ແລະ ກາຊາຂອງຫຼິ້ນຂະໜາດນ້ອຍ ໃຫ້ເດັກ ແລ້ວເວົ້າວ່າ “ຊົງນ້ຳຊາໃຫ້ແດ່ໄດ້ບໍ?” ເດັກສົມມຸດວ່າຣິນນ້ຳຊາ ດື່ມນ້ຳຊາ ແລະ ອື່ນໆ ບໍ? | ☐ ແມ່ນ | ☐ ບໍ່ |
| 4. ເວົ້າກັບເດັກວ່າ “ໄຟຢູ່ໃສ?” ຫຼື “ຊີ້ໃຫ້ເບິ່ງແດ່ວ່າໄຟຢູ່ໃສ”. ເດັກໃຊ້ນິ້ວຊີ້ ຊີ້ໄປໃສ່ດວງໄຟ ບໍ? | ☐ ແມ່ນ | ☐ ບໍ່ |
| 5. ເດັກສາມາດກໍ່ບລັອກໄມ້ ເປັນຫໍສູງໄດ້ບໍ? (ຖ້າໄດ້ ຈັກກ້ອນ __________ ) | ☐ ແມ່ນ | ☐ ບໍ່ |

B2: ເພື່ອບັນທຶກວ່າ “ແມ່ນ” ໃນຂໍ້ນີ້ ຕ້ອງແນ່ໃຈວ່າເດັກບໍ່ໄດ້ພຽງແຕ່ເບິ່ງມືຂອງທ່ານ ແຕ່ໄດ້ເບິ່ງໄປທີ່ສິ່ງຂອງ ທີ່ທ່ານກຳລັງຊີ້ຢູ່ແທ້ໆ.

B3: ຖ້າທ່ານສາມາດກະຕຸ້ນໃຫ້ເດັກ ສະແດງຕົວຢ່າງການຫຼິ້ນສົມມຸດໃນເກມອື່ນໄດ້ ກໍໃຫ້ຄະແນນ “ແມ່ນ” ໃນຂໍ້ນີ້.

B4: ຖ້າເດັກບໍ່ເຂົ້າໃຈຄຳວ່າ “ໄຟ” ໃຫ້ເຮັດຊ້ຳອີກເທື່ອໜຶ່ງ ໂດຍໃຊ້ “ຕຸກກະຕາໝີຢູ່ໃສ?” ຫຼື ສິ່ງຂອງອື່ນ ທີ່ເດັກເອື້ອມບໍ່ເຖິງ. ເພື່ອບັນທຶກວ່າ “ແມ່ນ” ໃນຂໍ້ນີ້ ເດັກຕ້ອງໄດ້ເງີຍໜ້າຂຶ້ນ ເບິ່ງໜ້າຂອງທ່ານ ໃນຊ່ວງເວລາທີ່ຊີ້ນິ້ວ.

*(ເບິ່ງຄຳແນະນຳການໃຫ້ຄະແນນຢູ່ດ້ານຫຼັງ)*

## ຂໍ້ຫຼັກຂອງ CHAT

**ພາກ A**

A5: ການຫຼິ້ນສົມມຸດ

A7: ການຊີ້ນິ້ວແບບບອກເລົ່າ

**ພາກ B**

B2: ການເບິ່ງຕາມການຊີ້

B3: ການສົມມຸດ

B4: ການຊີ້ນິ້ວດ້ວຍຕົນເອງ

## ຂໍ້ທີ່ບໍ່ແມ່ນຂໍ້ຫຼັກຂອງ CHAT

**ພາກ A**

A1: ການຫຼິ້ນຫຍອກລໍ້ທາງກາຍ

A2: ຄວາມສົນໃຈທາງສັງຄົມ

A3: ການພັດທະນາການເຄື່ອນໄຫວ

A4: ການຫຼິ້ນທາງສັງຄົມ

A6: ການຊີ້ນິ້ວແບບຮ້ອງຂໍ

A8: ການຫຼິ້ນຕາມໜ້າທີ່ຂອງສິ່ງຂອງ

A9: ການເອົາສິ່ງຂອງມາໃຫ້ເບິ່ງ

**ພາກ B**

B1: ການປະສານສາຍຕາ

B5: ການກໍ່ຫໍສູງດ້ວຍບລັອກໄມ້

**ການຈັດກຸ່ມຄວາມສ່ຽງ**

| | |
|---|---|
| ກຸ່ມສ່ຽງສູງຕໍ່ອອທິສຶມ | ບໍ່ຜ່ານ (ຕອບ “ບໍ່”) ຂໍ້ A5, A7, B2, B3, B4 |
| ກຸ່ມສ່ຽງປານກາງຕໍ່ອອທິສຶມ | ບໍ່ຜ່ານຂໍ້ A7, B4 (ແຕ່ບໍ່ຢູ່ໃນກຸ່ມສ່ຽງສູງ) |
| ກຸ່ມສ່ຽງຕໍ່າຕໍ່ອອທິສຶມ | ບໍ່ຢູ່ໃນສອງກຸ່ມສ່ຽງຂ້າງເທິງ |

**ຄໍາແນະນໍາການຈັດການ:**

**ກຸ່ມສ່ຽງສູງ:** ສົ່ງຕໍ່ໄປຫາຄລີນິກພັດທະນາການເດັກ ພ້ອມທັງສົ່ງຕໍ່ໄປຫາ ສູນການສຶກສາຮຽນຮ່ວມ ຫຼື ບໍລິການຊ່ວຍເຫຼືອໄລຍະຕົ້ນ ໃນທ້ອງຖິ່ນ.

**ກຸ່ມສ່ຽງປານກາງ:** ສົງໄສສູງ: ສົ່ງຕໍ່ຕາມຂ້າງເທິງ
ສົງໄສຕໍ່າ: ກວດຄືນໃໝ່ພາຍໃນໜຶ່ງເດືອນ

**ກຸ່ມສ່ຽງຕໍ່າ:** ຖ້າມີຄໍາຕອບ “ບໍ່” ຂໍ້ໃດຂໍ້ໜຶ່ງ ໃຫ້ກວດຄືນໃໝ່ພາຍໃນໜຶ່ງເດືອນ.